# ໂອບາດີຢາ

## OBADIAH

### Proud Edom Will Be Brought Low

1 ນິມິດຂອງໂອບາດີ ພຣະເຈົ້າກ່າວເຖິງເຣື່ອງ ເອໂດມດັ່ງນີ້ວ່າ ເຮົາໄດ້ຍິນຂ່າວຈາກພຣະຜູ້ເປັນເຈົ້າ ທູດຄົນນຶ່ງ
ຖືກສົ່ງໄປໃນຖ້າມກາງບັນດາປະຊາຊາດໃຫ້ເວົ້າວ່າ, “ຈົ່ງລຸກຂຶ້ນເຖີດ ໃຫ້ເຮົາລຸກໄປເຮັດເສິກສົງຄາມກັບ
ເມືອງເອໂດມ”
2 ເບິ່ງແມ, ເຮົາຈະກະທຳເຈົ້າໃຫ້ນ້ອຍຖ້າມກາງບັນດາປະຊາຊາດ ໃຫ້ເຈົ້າເປັນທີ່ດູຫມິ່ນຢ່າງຫລວງຫລາຍ
3 ຄວາມອວດອົ່ງແຫ່ງໃຈຂອງເຈົ້າໄດ້ລໍ້ລວງເຈົ້າເອງ ເຈົ້າຜູ້ຊຶ່ງອາສັຍຢູ່ໃນຫລືບຫີນທີ່ອາສັຍຂອງເຈົ້າຢູ່ສູງ
ເຈົ້າຄິດຢູ່ໃນໃຈວ່າ, “ຜູ້ໃດຈະໃຫ້ເຮົາລົງມາຍັງພື້ນດິນ”
4 ເຖິງວ່າເຈົ້າເວີ່ນຂຶ້ນໄປສູງເຫມືອນນົກອິນຊີ ເຖິງວ່າຮັງຂອງເຈົ້າຢູ່ໃນຫມູ່ດວງດາວທັງຫລາຍ ເຮົາຈະດຶງເຈົ້າລົງ
ມາຈາກທີ່ນັ້ນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ

### Pillage and Slaughter Will Repay Edom’s Cruelty

5 ຖ້າຂະໂມຍເຂົ້າມາຫາເຈົ້າ ຖ້າພວກປຸ້ນເຂົ້າມາໃນເວລາກາງຄືນ (ເຈົ້າຖືກທຳລາຍຫມົດກ້ຽງແບບໃດ) ເຂົາຈະ
ບໍ່ຂະໂມຍພຽງພໍແກ່ຕົວຂອງເຂົາເທົ່ານັ້ນຫລື ຖ້າຄົນເກັບອະງຸ່ນມາຫາເຈົ້າ ເຂົາຈະບໍ່ຖິ້ມອະງຸ່ນປະໄວ້ຫນ້ອຍ
ດຽວຫລື?
6 ເອຊາວໄດ້ຖືກປຸ້ນຢ່າງຮ້າຍແຮງແລ້ວແບບໃດຫນໍ ຊັບສົມບັດກໍຖືກຄົ້ນໄປຫມົດ
7 ພັນທະມິດທັງຫມົດຂອງເຈົ້າໄດ້ລໍ້ລວງເຈົ້າ ເຂົາໄດ້ໄລ່ເຈົ້າໄປເຖິງເຂດແດນ ພວກເຂົາໄດ້ຕໍ່ສູ້ຊະນະເຈົ້າແລ້ວ
ມິດທີ່ກິນເຂົ້າຫມໍ້ດຽວກັນກັບເຈົ້າກໍຫ້າງແຮ້ວດັກຈັບເຈົ້າ ເຣື່ອງນີ້ບໍ່ມີໃຜເຂົ້າໃຈອັນໃດເລີຍ
8 ພຣະຜູ້ເປັນເຈົ້າຊົງກ່າວວ່າ, ໃນວັນນັ້ນ ເຮົາຈະບໍ່ທຳລາຍຄົນສລາດໃຫ້ສິ້ນໄປຈາກເອໂດມ ແລະທຳລາຍ
ຄວາມເຂົ້າໃຈຈາກພູເຂົາເອຊາວຫລື
9 ນັກຮົບຂອງເຕມານຈະສະທ້ານຢ້ານກົວ ດັ່ງນັ້ນແຫລະ ທຸກຄົນທີ່ມາຈາກພູເຂົາເອຊາວຈະຖືກຕັດຂາດດ້ວຍ
ການສັງຫານ

### Edom Mistreated Hid Brother

10 ຍ້ອນວ່າຄວາມທາຣຸນທີ່ກະທຳແກ່ຢາໂຄບນ້ອງຊາຍຂອງເຈົ້າ ຄວາມອັບອາຍຈະຄຸມເຈົ້າໄວ້ ເຈົ້າຈະຕ້ອງຖືກ
ຕັດຂາດອອກຕລອດໄປເປັນນິດ
11 ໃນວັນທີ່ເຈົ້າຢືນຊື່ ໃນວັນທີ່ຄົນຕ່າງດ້າວເອົາຊັບສົມບັດຂອງເຂົາໄປ ແລະຄົນຕ່າງຊາດເຂົ້າມາທາງປະຕູເມືອງ
ເຂົາຈັບສລາກເອົາກຸງເຢຣູຊາເລັມ ເຈົ້າກໍເຫມືອນຄົນເຫລົ່ານັ້ນຄົນນຶ່ງ
12 ເຈົ້າບໍ່ຄວນຢືນຍິ້ມຢູ່ດ້ວຍຄວາມພໍໃຈ ໃນເມື່ອນ້ອງຊາຍຂອງເຈົ້າຮັບເຄາະໃນຄັ້ງນັ້ນ ເຈົ້າບໍ່ຄວນຍິນດີເຍີ້ຍປະ
ຊາຊົນຢູດາ ໃນເມື່ອເຂົາທັງຫລາຍຖືກທຳລາຍເຈົ້າບໍ່ຄວນຈະໂອ້ອວດໃນວັນທີ່ເຂົາຕົກທຸກໄດ້ຍາກ
13 ເຈົ້າບໍ່ຄວນເຂົ້າປະຕູເມືອງແຫ່ງປະຊາຊົນຂອງເຮົາໃນວັນນັ້ນເມື່ອເຂົາຖືກທຳລາຍ ເຈົ້າບໍ່ຄວນຢືນຍິ້ມຢູ່ໃນ
ເຣື່ອງພັຍວິບັດຂອງເຂົາໃນວັນນັ້ນ ເມື່ອເຂົາຖືກທຳລາຍເຈົ້າບໍ່ຄວນຈະເຂົ້າຍຶດຊັບສິນຂອງເຂົາໄປ ໃນວັນ
ນັ້ນເຂົາຖືກທຳລາຍ
14 ເຈົ້າບໍ່ຄວນຈະຢືນຕັນທາງແຍກຂອງເຂົາ ເພື່ອຈະດັກຈັບພວກຫລົບຫນີຂອງເຂົາ ເຈົ້າບໍ່ຄວນມອບຜູ້ທີ່ລອດມາ
ໄດ້ໃຫ້ແກ່ສັດຕຣູຂອງເຂົາ ໃນວັນທີ່ເຂົາຕົກທຸກໄດ້ຍາກ

15 ເພາະວັນແຫ່ງພຣະຜູ້ເປັນເຈົ້າໃກ້ປະຊາຊາດທັງຫລາຍເຂົ້າມາແລ້ວ ເຈົ້າກະທຳແກ່ເຂົາຢ່າງໃດ ກໍຈະມີຜູ້ມາ
ກະທຳແກ່ເຈົ້າຢ່າງນັ້ນ ການກະທຳຂອງເຈົ້າຈະກັບມາຕົກເທິງຫົວຂອງເຈົ້າເອງ
16 ເຈົ້າດື່ມຢູ່ເທິງພູບໍຣິສຸດຂອງເຮົາສັນໃດ ປະຊາຊາດທີ່ຢູ່ລ້ອມຮອບທັງຫລາຍກໍຈະດື່ມສັນນັ້ນ ເຂົາຈະດື່ມແລ້ວ
ກໍໂຊເຊໄປເຂົາຈະເປັນເຫມືອນຢ່າງທີ່ບໍ່ເຄີຍເກີດມາ

Israel’s Final Triumph

17 ແຕ່ຈະມີຄົນລອດພົ້ນໃນພູເຂົາຊີໂອນ ແລະທີ່ນັ້ນຈະບໍຣິສຸດ ແລະເຊື້ອສາຍຂອງຢາໂຄບຈະຖືກັມມະສິດທີ່ດິນ
ອັນເປັນກັມມະສິດຂອງເຂົາ
18 ເຊື້ອສາຍຂອງຢາໂຄບຈະເປັນໄຟ ເຊື້ອສາຍຂອງໂຢເຊັບຈະເປັນແປວໄຟ ແລະເຊື້ອສາຍຂອງເອຊາວຈະເປັນ
ຕໍເຂົ້າໄຟແລະແປວໄຟຈະໄຫມ້ແລະເຜົາຜານເສັຽ ເຊື້ອສາຍຂອງເອຊາວຈະບໍ່ມີໃຜລອດໄດ້ເລີຍ ເພາະວ່າ
ພຣະຜູ້ເປັນເຈົ້າໄດ້ຊົງກ່າວແລ້ວ
19 ຄົນເຫລົ່ານັ້ນທີ່ຢູ່ໃນເນເກັບຈະໄດ້ພູເຂົາເອຊາວເປັນກັມມະສິດ ຄົນເຫລົ່ານັ້ນທີ່ຢູ່ໃນທີ່ຮາບເຊເຟລາຈະໄດ້
ແຜ່ນດິນຟີລິສຕິນ ເຂົາຈະໄດ້ແຜ່ນດິນເອຟຣາອິມ ແລະແຜ່ນດິນຊາມາເຣັຽເປັນກັມມະສິດ ແລະເບັນຢາມິນ
ຈະໄດ້ກີເລອາດເປັນກັມມະສິດ
20 ຈາກທິດເຫນືອ ພົນໂຍທາຂອງອິສຣາເອນທີ່ເປັນຊະເລີຍຈະໄດ້ໂຟນີເຊັຽໄກໄປຈົນເຖິງຊາເຣຟັດເປັນກັມມະ
ສິດ ສ່ວນພວກຊະເລີຍຊາວເຢຣູຊາເລັມທີ່ຢູ່ໃນເຊຟາຣາດຈະໄດ້ຫົວເມືອງເນເກັບເປັນກັມມະສິດ
21 ພວກກູ້ຊາດຈະຂຶ້ນໄປທີ່ພູເຂົາຊີໂອນເພື່ອປົກຄອງພູເຂົາເອຊາວ ແລະຣາຊອານາຈັກນັ້ນຈະຕົກເປັນຂອງພຣະ
ຜູ້ເປັນເຈົ້າ